## ບົດຂ່າວ:

# ກອງປະຊຸມ ທົບທວນການຈັດຕັ້ງປະຕິບັດ ແຜນງານການຮ່ວມມື 2017-2021 ແລະ ພິທີເປີດ ແຜນງານການຮ່ວມມື 2022-2026 ລະຫວ່າງ ລັດຖະບານ ສປປ ລາວ ແລະ ອົງການ ສປຊ ເພື່ອການພັດທະນາ

**ນະຄອນຫຼວງວຽງຈັນ, 2 ມີນາ 2022** – ໂດຍການຮ່ວມມືກັບກະຊວງແຜນການ ແລະ ການລົງທຶນ, ອົງການສະຫະປະຊາຊາດ ເພື່ອການພັດທະນາ ໄດ້ເປີດໂຕເອກະສານແຜນງານການຮ່ວມມືກັບ ສປປ ລາວ ສະບັບໃໝ່ ສໍາລັບໄລຍະປີ 2022 – 2026.

ເອກະສານແຜນງານການຮ່ວມມືສະບັບໃໝ່ຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ ແມ່ນຜົນໄດ້ຮັບຂອງການປຶກສາຫາລືຢ່າງເຂັ້ມຂຸ້ນກັບຄູ່ຮ່ວມມືພາກລັດ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ດ້ວຍຄວາມມຸ່ງໝັ້ນທີ່ຈະສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9. ໂດຍສອດຄ່ອງກັບວາລະປີ 2030 ເພື່ອການພັດທະນາແບບຍືນຍົງ ແລະ ຂອບການຮ່ວມມືເພື່ອການຮ່ວມມືແບບຍືນຍົງ ຂອງອົງການສະຫະປະຊາຊາດ, ເອກະສານດັ່ງກ່າວຈະສະໜັບສະໜູນລັດຖະບານແຫ່ງ ສປປ ລາວ ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ ແລະ ຈະຮັບປະກັນວ່າ ໃຫ້ພວກເຮົາທຸກຄົນພ້ອມກັນກ້າວໄປ.

ໂດຍການເປັນປະທານກອງປະຊຸມຂອງທ່ານ ສະຖາບັນດິດ ອິນຊີຊຽງໃໝ່, ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ແລະ ທ່ານ ນາງ ຣິຄາຣດາ ຣິເອເຈີ, ຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈໍາ ສປປ ລາວ, ກອງປະຊຸມດັ່ງກ່າວ ມີການເຂົ້າຮ່ວມຂອງເຈົ້າໜ້າທີ່ລັດຖະບານລະດັບສູງຈາກກະຊວງ ແລະ ສະຖາບັນຂອງລັດທີ່ເປັນຄູ່ຮ່ວມມືທີ່ສໍາຄັນ ພ້ອມດຽວກັນກັບ ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງທາງສັງຄົມ ແລະ ພາກເອກະຊົນ.

ໃນລະຫວ່າງກອງປະຊຸມ, ທ່ານ ນາງ ແຄດເທີຣິນ ຟີອົງ, ຮອງຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈໍາ ສປປ ລາວ, ກໍໄດ້ສະຫຼຸບຜົນສໍາເລັດຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ ໃນໄລຍະ 5 ປີ ທີ່ຜ່ານມາ. ທ່ານໄດ້ເນັ້ນໜັກກ່ຽວກັບການສະໜັບສະໜູນຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ ຕໍ່ກັບລັດຖະບານແຫ່ງ ສປປ ລາວ ໃນການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9 ແລະ ການຈັດກອງປະຊຸມໂຕະມົນຄັ້ງຕ່າງໆຢ່າງມີຜົນສໍາເລັດ. ນອກຈາກນີ້, ທ່ານກໍຍັງໄດ້ເນັ້ນໃສ່ເປັນພິເສດຕໍ່ກັບການສະໜັບສະໜູນຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ ຕໍ່ກັບຂະແໜງການລະເບີດທີ່ບໍ່ທັນແຕກ ແລະ ຄວາມພະຍາຍາມຂອງລັດຖະບານ ໃນຂົງເຂດການປົກຄອງ, ຫຼັກການຄຸ້ມຄອງລັດດ້ວຍກົດໝາຍ, ບົດບາດຍິງ-ຊາຍ, ການຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ອື່ນໆ. ຕົວຢ່າງ, ທ່ານໃຫ້ຮູ້ວ່າ ອົງການສະຫະປະຊາຊາດ ເພື່ອການພັດທະນາ ໄດ້ຊ່ວຍສ້າງເຂດອະນຸລັກໂອ່ງ-ມັ່ງແຫ່ງຊາດ ຢູ່ແຂວງສະຫວັນນະເຂດ ເຊິ່ງໄດ້ສົ່ງຜົນໃຫ້ຈໍານວນປະຊາກອນຂອງສັດໃກ້ສູນພັນຊະນິດນີ້ເພີ່ມຂຶ້ນເປັນສອງເທົ່າ.

ທ່ານ ສະຖາບັນດິດ ອິນຊີຊຽງໃໝ່ ໄດ້ກ່າວວ່າ "ຂ້າພະເຈົ້າຫວັງເປັນຢ່າງຍິ່ງວ່າ ໃນອະນາຄົດຕໍ່ໜ້ານີ້, ອົງການ ສປຊ ເພື່ອການພັດທະນາ ແລະ ຄູ່ຮ່ວມພັດທະນາອື່ນໆ ຈະສືບຕໍ່ໃຫ້ການຊ່ວຍເຫຼືອແກ່ ລັດຖະບານ ສປປ ລາວ ກໍ່ຄື ບັນດາກະຊວງຂະແໜງການຕ່າງໆ ໃນການຈັດຕັ້ງປະຕິບັດ ແຜນງານການຮ່ວມມືໄລຍະໃໝ່ ໃຫ້ສາມາດບັນລຸໄດ້ຕາມຄາດໝາຍ ແລະ ປະກົດຜົນເປັນຈິງ. ພ້ອມດຽວກັນນີ້, ໃນສະພາບທີ່ ສປປ ລາວ ກໍາລັງຢູ່ໃນໄລຍະກະກຽມອອກຈາກປະເທດດ້ອຍພັດທະນາ, ການສ້າງຄວາມເຂັ້ມແຂງ ແລະເປັນເຈົ້າຕົນເອງໃຫ້ແກ່ບັນດາກະຊວງ ແລະ ຂະແໜງການໃນການຈັດຕັ້ງປະຕິບັດໂຄງການພັດທະນາຕ່າງໆ ຈຶ່ງມີຄວາມສໍາຄັນຫຼາຍ ໂດຍສະເພາະໃນຂັ້ນທ້ອງຖິ່ນ".

ຍຸດທະສາດ 5 ປີຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ ຄັ້ງໃໝ່ນີ້ ໄດ້ສຸມໃສ່ 3 ຂົງເຂດຍຸດທະສາດສຳລັບການພັດທະນາ ເຊັ່ນ: ຄວາມຈະເລີນຮຸ່ງເຮືອງທີ່ກວມລວມເອົາທຸກຄົນ; ສິ່ງແວດລ້ອມ, ການປ່ຽນແປງຂອງສະພາບດິນຟ້າອາກາດ ແລະ ການສ້າງຄວາມທົນທານ; ການປົກຄອງ ແລະ ຫຼັກການຄຸ້ມຄອງລັດດ້ວຍກົດໝາຍ. ໂດຍຜ່ານແຜນງານສະບັບໃໝ່ນີ້, ອົງການສະຫະປະຊາຊາດ ເພື່ອການພັດທະນາ ຈະພະຍາຍາມຮັບປະກັນວ່າ ພາຍໃນປີ 2026, ປະຊາຊົນ ໂດຍສະເພາະກຸ່ມຄົນທີ່ດ້ອຍໂອກາດທີ່ສຸດ ທີ່ດຳລົງຊີວິດຢູ່ໃນ ສປປ ລາວ ຈະໄດ້ຮັບຜົນປະໂຫຍດຈາກການເຕີບໂຕທີ່ຍືນຍົງ ແລະ ກວມລວມ, ແລະ ມີຄວາມທົນທານເພີ່ມຂຶ້ນ ຕໍ່ກັບຄວາມສ່ຽງດ້ານການປ່ຽນແປງຂອງສະພາບດິນຟ້າອາກາດ, ສະພາບຊໍ່ອກຈາກໄພພິບັດທາງທຳມະຊາດ ແລະ ລະເບີດທີ່ບໍ່ທັນແຕກ ໃນຂະນະທີ່ ສະຖາບັນຂອງລັດ ມີຄວາມອາດສາມາດເພີ່ມຂຶ້ນ ແລະ ກວມລວມເອົາປະຊາຊົນຫຼາຍຂຶ້ນ.

ທ່ານນາງ ຣິຄາຣດາ ຣິເອເຈີ ໄດ້ເນັ້ນຢໍ້າວ່າ “ພວກເຮົາມີຄວາມກະຕືລືລົ້ນທີ່ຈະປັບປຸງຄຸນນະພາບຂອງການສະໜັບສະໜູນທາງດ້ານວິຊາການຂອງພວກເຮົາ ຢູ່ໃນບັນດາຂົງເຂດເຫຼົ່ານີ້ ແລະ ສຸມໃສ່ສ້າງຜົນກະທົບໃຫ້ຫຼາຍຂຶ້ນ. ນອກຈາກນີ້, ອົງການສະຫະປະຊາຊາດ ເພື່ອການພັດທະນາ ກໍຈະສຸມໃສ່ດ້ານນະວັດຕະກຳ ແລະ ການຫັນເປັນດິຈິຕ່ອນ ຢູ່ໃນແຜນງານໃໝ່ຂອງພວກເຂົາໃຫ້ຫຼາຍຂຶ້ນ.”

ອົງການສະຫະປະຊາຊາດ ເພື່ອການພັດທະນາ ໄດ້ເປັນຄູ່ຮ່ວມພັດທະນາທີ່ສຳຄັນຂອງລັດຖະບານລາວ ເປັນເວລາຫຼາຍກວ່າ 4 ທົດສະວັດແລ້ວ. ຢູ່ໃນກອງປະຊຸມດັ່ງກ່າວ, ອົງການສະຫະປະຊາຊາດ ເພື່ອການພັດທະນາ ໄດ້ກ່າວຄືນຄຳໝາຍໝັ້ນຂອງຕົນ ເພື່ອສະໜັບສະໜູນລັດຖະບານ ໃນການບັນລຸເປົ້າໝາຍການພັດທະນາແບບຍືນຍົງ ຢູ່ໃນ ສປປ ລາວ.

ສຳລັບຂໍ້ມູນເພີ່ມເຕີມ ກະລຸນາຕິດຕໍ່:
ທ່ານ ນາງ ອັກສອນທິບ ສົມວໍລະຈິດ
ຜູ້ຮັບຜິດຊອບຝ່າຍການສື່ສານ, UNDP
aksonehip.somvorachit@undp.org
+856 20 5502 1550